# ສະສົມເຄື່ອງບັນເທົາເຫດສຸກເສີນ

ຫຼັງຈາກແຜ່ນດິນໄຫວ ອັນຮ້າຍແຮງເກີດຂຶ້ນ, ໄຟຟ້າ, ນ້ຳ ແລະແກສ ອາດຖືກຕັດຂາດໄປ. ການຊ່ວຍເຫລືອ ກ່ຽວກັບການພະຍາບານ ແບບສຸກເສີນ ອາດຈະບໍ່ມາເຖິງທ່ານເປັນຫລາຍໆ ວັນກໍໄດ້. ເພື່ອຄວາມແນ່ນອນ ທ່ານຄວນເກັບກຳ ສະສົມເອົາສິ່ງຂອງເຄື່ອງໃຊ້ຕ່າງໆ ດັ່ງຕໍ່ໄປນີ້ ໄວ້ຢູ່ກັບບ້ານເຮືອນຂອງທ່ານ. ແລະກໍຄວນເກັບກຳສະສົມເຄື່ອງບັນເທົາເຫດສຸກເສີນໄວ້ຢູ່ທີ່ບ່ອນເຮັດການ ຕລອດທັງສະສົມໄວ້ໃນຍານພາຫະນະຂອງທ່ານນຳດ້ວຍ.

- ☐ **ໄຟສາຍ** ພ້ອມດ້ວຍຖ່ານ ປ່ຽນໃໝ່. ເອົາໄຟສາຍໄວ້ຢູ່ຂ້າງຕຽງນອນຂອງທ່ານ ແລະ ບ່ອນອື່ນໆອີກ. ຫ້າມບໍ່ໃຫ້ໃຊ້ໄມ້ຂີດໄຟ ຫລືທຽນໄຂ ຫລັງຈາກທີ່ແຜ່ນດິນໄຫວເກີດຂຶ້ນ, ຈົນກວ່າທ່ານຮູ້ແນ່ແລ້ວ ບໍ່ມີທໍ່ແກສແຕກຮົ່ວ.
- ☐ **ວິທະຍຸແບບຫິ້ວ** ພ້ອມດ້ວຍຖ່ານ ປ່ຽນໃໝ່. ສ່ວນຫລາຍ ໂທລະສັບຈະຖືກຕັດ ຫລືບໍ່ກໍມີກຳນົດໃຊ້ ສະເພາະແຕ່ມີການເກີດການສຸກເສີນເທົ່ານັ້ນ. ແມ່ນວິທະຍຸເທົ່ານັ້ນ ທີ່ເປັນສິ່ງທີ່ດີທີ່ສຸດ ເພື່ອການຮັບຟັງຂ່າວຄາວ ຫລືລາຍລະອຽດຕ່າງໆ.
- ☐ **ເຄື່ອງປະຖົມພະຍາບານ;ວິຊາກ່ຽວກັບການປະຖົມພະຍາບານ** ສະສົມເອົາເຄື່ອງພະຍາບານຂອງທ່ານໄວ້ໃຫ້ດີ ແລະກໍເອົາໄວ້ຢູ່ລະຫວ່າງກາງ ຂອງສະຖານທີ່. ຮຽນວິຊາກ່ຽວກັບການປະຖົມພະຍາບານຂັ້ນຕົ້ນ ແລະ CPR. ທີ່ອີກແບບມາຢ່າງລ້າສຸດ.
- ☐ **ເຄື່ອງມອດໄຟ.** ເຄື່ອງມອດໄຟຂອງທ່ານ ຄວນຈະໃຫ້ເປັນຊະນິດທີ່ ເຫມາະສົມກັບໄຟທຸກໆຊະນິດ ແລະກໍຄວນເອົາໄວ້ບ່ອນທີ່ເອົາໄດ້ງ່າຍ. ສອນໃຫ້ທຸກໆຄົນໃນຄອບຄົວຮູ້ເຖິງວິທີໃຊ້.
- ☐ **ອາຫານການກິນ.** ສະສົມອາຫານ ໃຫ້ສາມາດກຸ້ມກິນນຶ່ງອາທິດ ໄວ້ສຳລັບແຕ່ລະຄົນ, ຊຶ່ງເປັນອາຫານຊະນິດ ອາຫານກະປ໋ອງ ຫລືອາຫານແຫ້ງ, ນົມຜຸ່ນ ແລະນ້ຳຫມາກໄມ້ກະປ໋ອງ ທີ່ສາມາດຫມູນໃຊ້ເປັນອາຫານປະຈຳແຕ່ລະວັນໆ ແລະເຮັດໃຫ້ເຕັມຕາມປະລິມານແບບທັມມະດາ.
- ☐ **ນ້ຳດື່ມ.** ສະສົມເອົານ້ຳໄວ້ ນຶ່ງແກລລອນ ສຳລັບແຕ່ລະຄົນ ຕໍ່ນຶ່ງມື້ ໂດຍການເອົາໃສ່ໄວ້ໃນເຄື່ອງບັນຈຸ ແລະອັດໃຫ້ດີ ບໍ່ໃຫ້ອາກາດສາມາດເຂົ້າອອກໄດ້.
- ☐ **ຜ້າຫົ່ມ, ເຄື່ອງນຸ່ງຫົ່ມ ແລະເກີບ.** ຜ້າຫົ່ມ ແລະເຄື່ອງນຸ່ງຫົ່ມຕ່າງໆ ແມ່ນເປັນສິ່ງທີ່ຈຳເປັນ ເພື່ອເຮັດໃຫ້ໄດ້ຮັບຄວາມອົບອຸ່ນ. ເກີບຊະນິດພື້ນແຂງ ເພື່ອປ້ອງກັນກະຈົກ ແລະເສດຫລັກແຕກຫັກ.
- ☐ **ເຄື່ອງຄົວກິນ.** ສະສົມເອົາເຕົາຕັ້ງໄຟ, ຖ່ານຕັ້ງໄຟ, ນ້ຳມັນອ່ອນໄຟ ແລະກັບໄຟ ເພື່ອກໍຣະນີທີ່ວ່າ ໄຟຟ້າ, ແກສ ລາລ . ຖືກຕັດຂາດໄປ ຫລືວ່າ ບໍ່ທຳງານ.
- ☐ **ສິ່ງຂອງພິເສດຕ່າງໆ.** ມີຢາແກ້ພະຍາດ ແລະອາຫານສຳລັບທາຣົກ ແລະສຳລັບຜູ້ທີ່ຕ້ອງຮັບປະທານອາຫານແບບພິເສດ ເນື່ອງດ້ວຍການເປັນພະຍາດ, ຢ່າງນ້ອຍໃຫ້ພຽງພໍສຳລັບນຶ່ງອາທິດ.
- ☐ **ເຄື່ອງມືຕ່າງໆ.** ມີຄີມ ສຳລັບປິດທໍ່ແກສ ແລະທໍ່ນ້ຳ ຖ້າຈຳເປັນ.

**Developed by California Office of Emergency Services**

ຖ້າຫາກຕ້ອງການລາຍລະອຽດເພີ້ມເຕີມ, ຈົ່ງຕິດຕໍ່ໄປຍັງ OFFICE OF EMERGENCY SERVICES ຫລື AMERICAN RED CROSS ປະຈຳເຂດຂອງທ່ານ.

**The Governor's Office of Emergency Services**
2800 Meadowview Road
Sacramento, CA 95832
(916) 262-1843

**OES Earthquake Programs**

**Coastal Region**
1300 Clay Street, Suite 400
Oakland, CA 94612
(510) 286-0895

**State of California**
**Gray Davis, Governor**

# ເອົາຊະນະ ແຜ່ນດິນໄຫວ!



**ການຕຽມພ້ອມ**
**ສຳລັບແຜ່ນດິນໄຫວ**
**ໃນແຄລີຟໍເນັຍ**

(LAO)

